สาທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ
Lao-China Securities Public Company

ເລກທີ 563 /ບລຈ

ນະຄອນຫຼວງວຽງຈັນ, ວັນທີ 23 SEP 2026

ແຈ້ງການ

ຮຽນ: ທ່ານ ຜູ້ອຳນວຍການໃຫຍ່ ຕະຫຼາດຫຼັກຊັບລາວ, ທີ່ນັບຖືຢ່າງສູງ;
ບັນດາ ຜູ້ຖືຮຸ້ນຂອງ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ, ທີ່ນັບຖືຢ່າງສູງ.

ເລື່ອງ: ການສະໜອງເອກະສານເພີ່ມຕື່ມກ່ຽວກັບບົດລາຍງານຜົນການດຳເນີນທຸລະກິດ ປະຈຳ 6 ເດືອນຕົ້ນປີ 2026 ຂອງບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ.

- ອີງຕາມ ຂໍ້ຕົກລົງວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ (ສະບັບປັບປຸງ) ຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 15/ຄຄຊ, ລົງ ວັນທີ 11 ທັນວາ 2026;
- ອີງຕາມ ລະບຽບວ່າດ້ວຍການເປີດເຜີຍຂໍ້ມູນ ຂອງ ຕະຫຼາດຫຼັກຊັບລາວ ສະບັບເລກທີ 008/ຕລຊລ, ລົງ ວັນທີ 27 ກັນຍາ 2018.

ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ (ບລຈ) ໃນນາມເປັນບໍລິສັດຈົດທະບຽນ ຂໍຖືເປັນກຽດແຈ້ງມາຍັງ ທ່ານຊາບ ກ່ຽວກັບການສະໜອງເອກະສານເພີ່ມຕື່ມກ່ຽວກັບບົດລາຍງານຜົນການດຳເນີນທຸລະກິດ ປະຈຳ 6 ເດືອນຕົ້ນປີ 2026 ຂອງ ບລຈ. ໃນປະຈຸບັນ, ອີງຕາມມະຕິກອງປະຊຸມສະພາບໍລິຫານ ບລຈ ສະໄໝສາມັນ ຄັ້ງທີ III ປະຈຳປີ 2026 ໄດ້ເຫັນດີຮັບຮອງ ບົດລາຍງານການເງິນ ປະຈຳ 6 ເດືອນຕົ້ນປີ 2026, ຊຶ່ງ ບລຈ ໄດ້ສຳເລັດການເປີດເຜີຍບົດລາຍງານການເງິນ ທີ່ຜ່ານການທົບທວນຄືນຈາກຜູ້ກວດສອບພາຍນອກ ໃນວັນທີ 18 ກັນຍາ 2026. ສະນັ້ນ, ເພື່ອປະຕິບັດພັນທະໃນການເປີດເຜີຍທີ່ກຳນົດໄວ້ຕາມລະບຽບການຂອງ ຕະຫຼາດຫຼັກຊັບລາວ, ບລຈ ຈຶ່ງຂໍສະໜອງເອກະສານເພີ່ມຕື່ມກ່ຽວກັບບົດລາຍງານຜົນການດຳເນີນທຸລະກິດ ບລຈ ປະຈຳ 6 ເດືອນຕົ້ນປີ 2026 ບລຈ ແມ່ນໄດ້ຄັດຕິດມາພ້ອມນີ້. ສຳລັບບົດລາຍງານຜົນການດຳເນີນທຸລະກິດດັ່ງກ່າວ ແມ່ນມີເນື້ອໃນ ແລະ ຕົວເລກ ແມ່ນສອດຄ່ອງກັບບົດລາຍງານການເງິນທີ່ກອງປະຊຸມສະພາບໍລິຫານ ບລຈ ໄດ້ຮັບຮອງແລ້ວ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ.

ປະທານສະພາບໍລິຫານ

ໝູໄຊ ພູມສຸວັນ

ຜູ້ອຳນວຍການ

ບໍລິສັດ ຫຼັກຊັບ ລາວ-ຈີນ ມະຫາຊົນ Lao-China Securities Public Company

ສອາງ ເວີຍ

ຜູ້ປະສານງານ: ນາງ ມຸກດາວະດີ ມີ່ງບຸບຜາ
ເບີໂທຕິດຕໍ່: 020 2996 1995